VIENTIANE CENTER
ວຽງຈັນເຊັ້ນເຕີ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
****

ເລກທີ: 036 /ວຈຊຕ
ນະຄອນຫຼວງວຽງຈັນ, ວັນທີ: 21 MAR 2022

ຮຽນ: ຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ
ທ່ານຜູ້ອໍານວຍການໃຫຍ່ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ເລື່ອງ: ແຈ້ງມະຕິກອງປະຊຸມສາມັນ ສະພາບໍລິຫານຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ຄັ້ງທີ 1 ປະຈໍາປີ 2022

- ອີງຕາມຂໍ້ຕົກລົງຂອງຄະນະກໍາມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍລານ ແລະ ການເປີດເຜີຍຂໍ້ມູນ ສະບັບ ເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019.

- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ (ວຈຊຕ) ຂໍຖືເປັນກຽດແຈ້ງມະຕິຂອງກອງປະຊຸມສາມັນ ສະພາບໍລິຫານ ຄັ້ງທີ 1 ປະຈໍາປີ 2022 ໃນ ວັນທີ 21 ມີນາ 2022, ເຊິ່ງມີລາຍລະອຽດດັ່ງລຸ່ມນີ້ :

ມະຕິ 01: ຮັບຮອງເອົາການລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ປະຈາປີ 2020 ແລະ ມະຕິກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງ 1/2021 ເພື່ອລາຍງານຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປ ຮັບຊາບ.

ມະຕິ 02: ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈາປີ 2020 ແລະ ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງ 1/2021 ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປ ພິຈາລະນາ ແລະ ຮັບຮອງ.

ມະຕິ 03: ຮັບຮອງເອົາບົດລາຍງານການເງິນປະຈາປີ 2021 ຂອງບໍລິສັດ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປພິຈາລະນາ ແລະ ຮັບຮອງ.

ມະຕິ 04: ຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2021 ແລະ ແຜນການດຳເນີນທຸລະກິດ ປະຈຳປີ 2022 ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປພິຈາລະນາ ແລະ ຮັບຮອງ.

ມະຕິ 05: ຮັບຮອງເອົາແຜນການຈ່າຍເງິນປັນຜົນປະຈຳປີ 2021 ຂອງຂອງບໍລິສັດ ວຈຊຕ ໃຫ້ຜູ້ຖືຮຸ້ນ ໃນອັດຕາ 10 ກີບຕໍ່ຮຸ້ນ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປພິຈາລະນາ ແລະ ຮັບຮອງ.

ມະຕິ 06: ຮັບຮອງເອົາແຜນການຄັດເລືອກສະມາຊິກສະພາບໍລິຫານສະໄໝທີ 3 ຂອງບໍລິສັດ ວຈຊຕ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປພິຈາລະນາ ແລະ ຮັບຮອງ.

ມະຕິ 07: ຮັບຮອງເອົາການລາຍງານການວ່າຈ້າງບໍລິສັດກວດສອບບັນຊີອິດສະຫຼະ ຂອງບໍລິສັດ ວຈຊຕ ເພື່ອລາຍງານຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປ ຮັບຊາບ.

ມະຕິ 08: ຮັບຮອງເອົາແຜນການຄັດເລືອກສະມາຊິກຄະນະກຳມະການຕ່າງໆຂອງບໍລິສັດວຈຊຕ ຊຸດໃຫມ່ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປພິຈາລະນາ ແລະ ຮັບຮອງ.

ມະຕິ 09: ຮັບຮອງເອົາການປັບປ່ຽນຜູ້ຕາງໜ້ານິຕິບຸກຄົນຂອງບໍລິສັດ ວຈຊຕ ຈາກທ່ານຫວັງເຫວີຍຄຸນ (Mr. WANG Weikun) ມາເປັນທ່ານ ເຫີຈຸ່ນ(Mr. HE Jun) ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປພິຈາລະນາ ແລະ ຮັບຮອງ.

ມະຕິ 10: ຮັບຮອງເອົາການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປພິຈາລະນາ ແລະ ຮັບຮອງ.

ມະຕິ 11: ຮັບຮອງເອົາແຜນການຈັດຕັ້ງປະຕິບັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ຄືດັ່ງລຸ່ມນີ້:

1. ກຳນົດເອົາວັນທີ 01/04/2022 ເປັນມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນຂອງ ວຈຊຕ ເພື່ອກຳນົດສິດຂອງຜູ້ຖືຮຸ້ນ ໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ວຈຊຕ ປະຈຳປີ 2021 ແລະ ໄດ້ຮັບເງິນປັນຜົນຂອງຮຸ້ນ ວຈຊຕ ປະຈຳປີ 2021;

2. ເວລາ ແລະ ສະຖານທີ່ປະຊຸມ: ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ຊິຈັດຂຶ້ນໃນວັນທີ 29 ເມສາ 2022 ເວລາ 14:00 ໂມງ ທີ່ ຫ້ອງປະຊຸມ ໄດເອີ້ມ້ອນ ຂອງໂຮງແຮມແລນມາກ.

3. ເນື້ອໃນຂອງແຕ່ລະບົດລາຍງານ ແລະ ວາລະທີ່ຈະສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ພິຈາລະນາ ແລະ ຮັບຮອງ ຄືດັ່ງລຸ່ມນີ້:

ວາລະທີ 01: ຮັບຟັງການລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ແລະ ມະຕິກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງ 1/2021.

ວາລະທີ 02: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ແລະ ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງ 1/2021.

VIENTIANE CENTER
ວຽງຈັນເຊັ້ນເຕີ
ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ວາລະທີ 03: ພິຈາລະນາ ແລະ ຮັບຮອງບົດລາຍງານການເງິນປະຈຳປີ 2021 ຂອງບໍລິສັດ ວຈຊຕ.

ວາລະທີ 04: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2021 ແລະ ແຜນການດຳເນີນທຸລະກິດປີ 2022

ວາລະທີ 05: ພິຈາລະນາ ແລະ ຮັບຮອງແຜນການຈ່າຍເງິນປັນຜົນປະຈຳປີ 2021 ຂອງບໍລິສັດ ວຈຊຕ ໃຫ້ຜູ້ຖືຮຸ້ນ.

ວາລະທີ 06: ພິຈາລະນາ ແລະ ຮັບຮອງແຜນການຄັດເລືອກສະມາຊິກສະພາບໍລິຫານສະໄໝທີ່ 3 ຂອງບໍລິສັດ ວຈຊຕ.

ວາລະທີ 07: ຮັບຟັງການລາຍງານການອ່າຈ້າງບໍລິສັດກວດສອບບັນຊີອິດສະຫຼະ ຂອງບໍລິສັດ ວຈຊຕ.

ວາລະທີ 08: ພິຈາລະນາ ແລະ ຮັບຮອງແຜນການຄັດເລືອກສະມາຊິກຄະນະກຳມະການຕ່າງໆຂອງບໍລິສັດ ວຈຊຕ ຊຸດໃຫມ່.

ວາລະທີ 09: ພິຈາລະນາ ແລະ ຮັບຮອງການປັບປ່ຽນຜູ້ຕາງໜ້ານິຕິບຸກຄົນຂອງບໍລິສັດ ວຈຊຕ.

ວາລະທີ 10: ພິຈາລະນາ ແລະ ຮັບຮອງການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ.

ປະທານສະພາບໍລິຫານ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

Wang Wei Kun